ກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2025 ທະນາຄານຮ່ວມພັດທະນາ ມະຫາຊົນ









ໃນຕອນເຊົ້າ ວັນທີ 29 ເມສາ 2026 ຢູ່ທີ່ຫ້ອງປະຊຸມໃຫຍ່ຊັ້ນ 6, ທະນາຄານ ຮ່ວມພັດທະນາ ມະຫາຊົນ (ທຄຮ), ນະຄອນຫຼວງວຽງຈັນ, ໄດ້ເປີດກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2025 ໂດຍການເປັນປະທານກອງປະຊຸມຂອງ ທ່ານ ວິໄລ ສີພະພອນ, ປະທານສະພາ ບໍລິຫານ ທຄຮ, ມີສະມາຊິກສາພາບໍລິຫານ, ຄະນະອຳນວຍການ, ຕາງໜ້າສຳນັກງານຄະນະກຳມະ ການຄຸ້ມຄອງຫຼັກຊັບ, ຕາງໜ້າຕະຫຼາດຫຼັກຊັບລາວ, ຕາງໜ້າບໍລິສັດກວດສອບບັນຊີພາຍນອກ ແລະ ຜູ້ຖືຮຸ້ນ.

ໃນກອງປະຊຸມ, ມີຜູ້ຖືຮຸ້ນທີ່ໄດ້ລົງທະບຽນເຂົ້າຮ່ວມດ້ວຍຕົນເອງ 50 ທ່ານ ເຊິ່ງລວມເປັນຈຳນວນຮຸ້ນ 658,184,634 ຮຸ້ນ ຫຼື ເທົ່າກັບ 87.758% ຂອງຈຳນວນຮຸ້ນທັງ ໝົດ; ມີຜູ້ຖືຮຸ້ນທີ່ໄດ້ມອບສິດ 1 ທ່ານ ເຊິ່ງລວມເປັນຈຳນວນຮຸ້ນ 30,359,975 ຮຸ້ນ ຫຼື ເທົ່າກັບ 4.048%; ມີຜູ້ເຂົ້າຮ່ວມທາງອອນລາຍຈຳນວນ 308 ຄົນ ເຊິ່ງລວມເປັນຈຳນວນຮຸ້ນ 14,357,091 ຮຸ້ນ ຫຼື ເທົ່າກັບ 1.941%. ລວມອົງປະຊຸມທັງໝົດ ມີຜູ້ຖືຮຸ້ນເຂົ້າຮ່ວມ 359 ຄົນ ເຊິ່ງລວມເປັນຈຳນວນຮຸ້ນ 702,901,700 ຮຸ້ນ ຫຼື ເທົ່າກັບ 93.720% ຈາກຜູ້ຖືຮຸ້ນທີ່ມີທັງ ໝົດ 2,054 ຄົນ ເຊິ່ງລວມເປັນຈຳນວນຮຸ້ນ 750,000,000 ຮຸ້ນ. ສຳລັບຮຸ້ນທີ່ບໍ່ໄດ້ເຂົ້າຮ່ວມ ກອງປະຊຸມ ມີຈຳນວນ 47,098,300 ຮຸ້ນ ຫຼື ເທົ່າກັບ 6.28 % ຂອງຈຳນວນຮຸ້ນ ທຄຮ ທັ້ງ ໝົດ.

ກອງປະຊຸມເລີ່ມດ້ວຍ ທ່ານ ວິໄລ ສີພະພອນ, ປະທານສະພາບໍລິຫານ ທຄຮ ໄດ້ ກ່າວຕ້ອນຮັບ ແລະ ກ່າວເປີດກອງປະຊຸມ ຢ່າງເປັນທາງການ, ຈາກນັ້ນ ທ່ານ ສາຄອນ ຍໍພັນໄຊ, ຜູ້ອຳນວຍການ ທຄຮ ກໍໄດ້ດຳເນີນວາລະກອງປະຊຸມ ເຊິ່ງລວມມີ 10 ວາລະ ດັ່ງນີ້:

ວາລະທີ 1: ພິຈາລະນາ ແລະ ຮັບຮອງເອົາ ບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2024.

ວາລະທີ 2: ພິຈາລະນາ ແລະ ຮັບຮອງເອົາ ແຜນເພີ່ມທຶນຈົດທະບຽນ ໂດຍການນຳໃຊ້ສ່ວນເພີ່ມ ມູນຄ່າຮຸ້ນ (Share Premium) ເພື່ອອອກຮຸ້ນປັນຜົນ (Bonus Issue) ໃຫ້ແກ່ຜູ້ຖືຮຸ້ນເດີມ.

ວາລະທີ 3: ພິຈາລະນາ ແລະ ຮັບຮອງເອົາ ຜົນການດຳເນີນງານ ແລະ ບົດລາຍງານຖານະການເງິນ ປະຈຳປີ 2025.

ວາລະທີ 4: ພິຈະນາ ແລະ ຮັບຮອງເອົາ ແຜນການດຳເນີນທຸລະກິດ ປີ 2026.

ວາລະທີ 5: ພິຈາລະນາ ແລະ ຮັບຮອງເອົາ ການລົງທຶນໃນກອງທຶນສ່ວນບຸກຄົນ.

ວາລະທີ 6: ພິຈາລະນາ ແລະ ຮັບຮອງເອົາ ການຮ່ວມທຶນສ້າງຕັ້ງບໍລິສັດລາວ ບໍລິຫານຊັບສິນ ຈຳ ກັດ (Lao Asset Management Company).

ວາລະທີ 7: ພິຈາລະນາ ແລະ ຮັບຮອງເອົາ ແຜນການຈ່າຍເງິນປັນຜົນ ປະຈຳປີ 2025 ຂອງ ທຄຮ.

ວາລະທີ 8: ພິຈາລະນາ ແລະ ຮັບຮອງເອົາ ການແຕ່ງຕັ້ງບໍລິສັດກວດສອບບັນຊີພາຍນອກ ປີ 2026.

ວາລະທີ 9: ພິຈາລະນາ ແລະ ຮັບຮອງເອົາ ການປັບປຸງໂຄງຮ່າງການຈັດຕັ້ງ ຂອງ ທຄຮ.

ວາລະທີ 10: ພິຈາລະນາ ແລະ ຮັບຮອງເອົາ ກິດລະບຽບຂອງ ທຄຮ (ສະບັບປັບປຸງ).

ກອງປະຊຸມໄດ້ດຳເນີນວາລະຢ່າງຄົບຖ້ວນ ເຊິ່ງໄດ້ພິຈາລະນາ ແລະ ຮັບຮອງເອົາ ທັ້ງ ໝົດ 10 ວາລະ ແລະ ກອງປະຊຸມໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນ ທີ່ ເຂົ້າຮ່ວມກອງປະຊຸມ. ໃນນັ້ນ, ກອງປະຊຸມໄດ້ຮັບຮອງເອົາແຜນການຈ່າຍເງິນປັນຜົນ ປະຈຳປີ 2025 ຂອງ ທຄຮ ຄື: ຈ່າຍເງິນປັນຜົນ 800 ກີບ/ຮຸ້ນ, ລວມມູນຄ່າເງິນປັນຜົນທັງໝົດ 600,000,000,000 ກີບ ໂດຍໄດ້ກຳນົດມື້ຈ່າຍເງິນປັນຜົນ ແມ່ນວັນທີ 25 ພຶດສະພາ 2026.

ໃນຕອນທ້າຍຂອງກອງປະຊຸມ ທ່ານ ວິໄລ ສີພະພອນ, ປະທານສະພາບໍລິຫານ ທຄຮ ກໍໄດ້ກ່າວປິດກອງປະຊຸມຢ່າງເປັນທາງການ, ພ້ອມທັງໄດ້ອວຍໄຊໃຫ້ພອນ ແດ່ຜູ້ເຂົ້າຮ່ວມ ກອງປະຊຸມ ຈົ່ງມີສຸຂະພາບແຂງແຮງ, ປະສົບຜົນສຳເລັດ ໃນທຸລະກິດຂອງຕົນ ໃຫ້ມີການ ຂະຫຍາຍຕົວຍິ່ງໆ ຂຶ້ນໄປ ຕາມຄຳຂວັນ ຂອງທະນາຄານຮ່ວມພັດທະນາ ມະຫາຊົນ ກໍຄື **"ເຕີບ ໃຫຍ່ໄປພ້ອມກັນ"**.